ປັບປຸງນັບແຕ່ 30 ມິຖຸນາ 2020

***ທ່ານອາດຮູ້ຈັກ, ການດຳເນີນງານຂອງ Census Bureau ແມ່ນຈະປ່ຽນແປງເພື່ອຕອບສະໜອງກັບ COVID-19. ບັນດາຄົວເຮືອນຍັງສາມາດໃຫ້ຄຳຕອບໃນ ການສຳຫລວດພົນລະເມືອງ 2020 ໃນຊ່ວງໄລຍະນີ້ໄດ້!*** ທ່ານສາມາດຕອບການສຳຫລວດພົນລະເມືອງດ້ວຍຕົນເອງ -- ທາງອອນໄລນ໌, ທາງໂທລະສັບ ຫລື ໄປສະນີ -- ໂດຍບໍ່ຕ້ອງພົບປະກັບ ຜູ້ເຮັດການສຳຫລວດດ້ວຍຕົນເອງ.
ເວລາກຳນົດສຳລັບການຕອບໄດ້ຂະຫຍາຍເວລາອອກຈາກ 31 ກໍລະກົດ (ເດືອນເຈັດ) ຫາ 31 ຕຸລາ (ເດືອນສິບ).

- ທ່ານສາມາດຕອບຄຳຖາມ ອອນໄລນ໌ ທີ່ www.2020census.gov.
- ທ່ານສາມາດຖາມຄຳຖາມ ຫລື ຕອບທາງໂທລະສັບ. ສຳລັບເບີໂທລະສັບ ໃຫ້ເບິ່ງທີ່ ເອກະສານການສຳຫລວດ.
- ຖ້າທ່ານບໍ່ໄດ້ຕອບຄຳຖາມການສຳຫລວດ, Census Bureau ຈະສົ່ງໄປສະນີຍະບັດ ຫລື ໂປສກາດໃຫ້ທ່ານດ້ວຍ ID ຈຳເພາະ ໃນຊ່ວງອາທິດຂອງວັນທີ 22 ກໍລະກົດ.
    - ມັນຈະບໍ່ລວມເອົາແບບສອບຖາມທີ່ເປັນເຈ້ຍ, ສະນັ້ນ ຕ້ອງແນ່ໃຈໃຫ້ໄປອອນໄລນ໌ ຫລື ໂທຫາ Census Bureau ເພື່ອຕອບ.
    - ຫາກທ່ານໄດ້ຮັບ ແບບສອບຖາມເປັນເຈ້ຍມທາງໄປສະນີກ່ອນໜ້ານີ້, ທ່ານຍັງສາມດຕອບທາງໄປສະນີ ໂດຍໃຊ້ ແບບສອບຖາມທີ່ເປັນເຈ້ຍດັ່ງກ່າວ. ແນວໃດກໍ່ຕາມ, Census Bureau ບໍ່ມີແຜນເພື່ອສົ່ງ ແບບສອບຖາມເປັນເຈ້ຍໃໝ່ທາງໄປສະນີໃຫ້ກັບ ບັນດາຄົວເຮືອນທີ່ຍັງບໍ່ໄດ້ຕອບໃນເວລານີ້.
- Census Bureau ໄດ້ສົ່ງໂປສກາດເຕືອນແລ້ວລະຫວ່າງ 24 ມິຖຸນາ ແລະ 3 ມິຖຸນາ ໄປຍັງຕູ້ຫ້ອງການໄປສະນີໃນຊຸມຊົນ ເຊິ່ງຕູ້ໄປສະນີ ຫລື ຕູ້ P.O ເປັນພຽງທີ່ຢູ່ໄປສະນີທີ່ມີ.
    - ໂປສກາດອະນຸຍາດບັນດາຄົວເຮືອນຮູ້ວ່າ ຜູ້ເຮັດການສຳຫລວດອາດຈະສົ່ງ ການເຊີນເຂົ້າຮ່ວມການສຳຫລວດໃນໄວໆນີ້ ຫລື ຈະໄປພົບທ່ານພາຍຫລັງເພື່ອສຳພາດພວກເຂົາ. ໂປສກາດຍັງໃຫ້ຂໍ້ມູນກ່ຽວກັບວິທີການຕອບ 2020 Census ທາງອອນໄລນ໌ ຫລື ໂທລະສັບ. ບັນດາຄົວເຮືອນຄວນຕອບ 2020 Census ໃຫ້ໄວຫລັງຈາກພວກເຂົາໄດ້ຮັບຊຸດການເຊີນຂອງພວກເຂົາ.
    - ບັນດາຄົວເຮືອນທີ່ໄດ້ຮັບເອກະສານໃນຕູ້ໄປສະນີ ຄວນສະໜອງ ທີ່ຢູ່ຖະໜົນຂອງພວກເຂົາ (ບໍ່ແມ່ນ ໝາຍເລກ ຕູ້ໄປສະນີ) ໃນເວລາຕອບເພື່ອຮັບປະກັນວ່າ ຄຳຕອບຂອງພວກເຂົາກ່ຽວໂຍງກັບ ທີ່ຢູ່ຕົວຈິງບ່ອນທີ່ພວກເຂົາຢູ່ອາໄສ, ບໍ່ແມ່ນບ່ອນທີ່ພວກເຂົາຮັບເອກະສານ. ບັນດາຄົວເຮືອນສາມາດຕອບ ອອນໄລນ໌ເປັນອັງກິດ ຫລື ພາສາອື່ນໆ 12 ປະເພດ, ທາງ ໂທລະສັບໂດຍໃຊ້ Census ID ທີ່ລວມຢູ່ໃນຊຸດເອກະສານ ຫລື ກອບຂໍ້ມູນໃນພວກມັນໃຫ້ສຳເລັດ ແລະ ສົ່ງກັບຄືນ ແບບສອບຖາມທີ່ເປັນເຈ້ຍຄືນທາງໄປສະນີ.

ເບິ່ງເຈ້ຍເອກະສານຂໍ້ມູນດ້ານລຸ່ມ ສຳລັບ ຂໍ້ມູນເພີ່ມເຕີມກ່ຽວກັບ ວິທີການຕອບ ແລະ ວິທີການຮັບການຊ່ວຍເຫລືອທາງພາສາ.

ນີ້ຄືການປັບປຸງໃໝ່ຈາກ Census Bureau ຕໍ່ກັບການປ່ຽນແປງ ການດຳເນີນງານຂອງພວກເຂົາ:

- ເວລາກຳນົດສຳລັບການຕອບ ອອນໄລນ໌, ທາງໂທລະສັບ ຫລື ການສົ່ງແບບຟອມເຈ້ຍຄືນທາງໄປສະນີ ແມ່ນໄດ້ຖືກຂະຫຍາຍເວລາອອກຈາກ 31 ກໍລະກົດ ຫາ 31 ຕຸລາ.
- ຄົນທີ່ປະເຊີນບັນຫາການໄຮ້ບ້ານຢູ່ອາໄສຈະຖືກນັບເຂົ້າບ່ອນທີ່ພວກເຂົາກຳລັງພັກຢູ່ ໃນເວລາຜູ້ເຮັດການສຳຫລວດໄປພົບ ລະຫວ່າງ ວັນທີ 22-24 ກັນຍາ. ຜູ້ເຮັດການສຳຫລວດຈະປະຕິບັດຕາມ ຄຳແນະນຳດ້ານສາທາລະນະສຸກທ້ອງຖິ່ນລ່າສຸດ ກ່ຽວກັບ ອຸປະກອນປ້ອງກັນສ່ວນຕົວ (PPE) ແລະ ໄລຍະຫ່າງທາງສັງຄົມ.
- ຈາກວັນທີ 3-28 ກັນຍາ, ຜູ້ເຮັດສຳຫລວດຈະນັບຜູ້ຄົນທີ່ກຳລັງພັກຢູ່ທີ່ ພື້ນທີ່ຕັ້ງແຄ້ມ ຫລື ເຕັ້ນ, ບ່ອນຈອດລົດ RV, ທ່າຈອດເຮືອ (marinas) ແລະ ໂຮງແຮມ ຫາກປົກະຕິແລ້ວພວກເຂົາບໍ່ພັກຢູ່ບ່ອນອື່ນໆ.
- Census Bureau ໄດ້ດຳເນີນຕໍ່ ການດຳເນີນງານການປັບປຸງກ່ຽວກັບ ການນັບຈຳນວນ ໃນວັນທີ 14 ມິຖຸນາ. ໃນພື້ນທີ່ເຫລົ່ານີ້, ເນື່ອງຈາກພວກມັນເປັນບ່ອນຫ່າງໄກສອກຫລີກທາງທີ່ຕັ້ງ, ຜູ້ເຮັດການສຳຫລວດຈະເກັບເອົາຄຳຕອບຂອງການສຳຫລວດດ້ວຍຕົນເອງ, ແທນທີ່ຈະເຊີນຄົວເຮືອນເພື່ອຕອບ ທາງ ອອນໄລນ໌, ໂທລະສັບ ຫລື ທາງໄປສະນີ. ການດຳເນີນງານແມ່ນຈະເກີດຂຶ້ນໃນວັນທີ 14 ມິຖຸນາ ຫາ 29 ກໍລະກົດ.
- ເລີ່ມຕົ້ນການຕິດຕາມການສຳຫວດທີ່ບໍ່ໄດ້ຕອບຈະຖືກເລື່ອນອອກໄປ, ເມື່ອ ຜູ້ເຮັດການສຳຫລວດຢ້ຽມຢາມທ່ານທີ່ປະຕູເຮືອນເພື່ອນັບຄົວເຮືອນທີ່ຍັງບໍ່ໄດ້ຕອບຄຳຖາມເທື່ອ. ໃນພື້ນທີ່ສ່ວນໃຫ່ຍ, ມັນຖືກເລື່ອນອອກໄປເຖິງ 11 ສິງຫາ ແລະ ສິ້ນສຸດໃນ ວັນທີ 31 ຕຸລາ.
- ເລີ່ມຕົ້ນໃນກາງເດືອນກໍລະກົດ, Census Bureau ຈະເປີດຄືນ ຫ້ອງການສຳຫລວດເຂດຫົກແຫ່ງ (ACOs) ທົ່ວປະເທດ ແລະຈະເລີ່ມຕົ້ນ ສຳພາດຄົວເຮືອນທີ່ຍັງບໍ່ໄດ້ຕອບຄຳຖາມ 2020 Census ເທື່ອ.
    - ນີ້ແມ່ນການເປີດໄວກ່ອນກຳນົດຂະນະສ່ວນໃຫ່ຍຂອງປະເທດຈະບໍ່ມີ ການຕິດຕາມຄົວເຮືອນທີ່ບໍ່ໄດ້ຕອບແບບຕົວຕໍ່ຕົວໄດ້ ຈົນກວ່າ ເດືອນສິງຫາ.
    - ACOs ຫົກບ່ອນທີ່ຈະເຮັດການເລີ່ມຕົ້ນກ່ອນເວລາກຳນົດຈະປະກາດໃນຕົ້ນເດືອນກໍລະກົດນີ້.
    - ຫ້ອງການການສຳຫລວດເຂດເພີ່ມເຕີມອາດຈະປະກາດສຳລັບ ການເລີ່ມຕົ້ນແບບເບົາໆຄື້ນທີ່ສອງ ເຊິ່ງຈະເກີດຂຶ້ນໃນຊ່ວງທ້າຍໆເດືອນກໍລະກົດນີ້.
    - **ຜູ້ເຮັດການສຳຫລວດທັງໝົດຈະໄດ້ຮັບການອົບຮົມຕໍ່ກັບກົດລະບຽບ ໄລຍະຫ່າງທາງສັງຄົມ. ພວກເຂົາຈະໄດ້ຮັບ PPE ແລະປະຕິບັດຕາມຄຳແນະນຳທ້ອງຖິ່ນ ສຳລັບການໃຊ້ຂອງພວກເຂົາ.**
- *ການສຳພາດຄືນໃໝ່ເພື່ອຕິດຕາມ ຜູ້ທີ່ຍັງບໍ່ໄດ້ຕອບການສຳຫລວດ: ໃນບາງກໍລະນີ, ຜູ້ເຮັດການສຳຫລວດຄົນທີສອງອາດໄປທີ່ ເຮືອນຂອງທ່ານເພື່ອ ເຮັດການສຳພາດສັ້ນໆ ເພື່ອຮັບປະກັນວ່າ ຜູ້ເຮັດການສຳຫລວດແຕ່ລະຄົນໄດ້ປະຕິບັດຕາມ ການອົບຮົມຂອງ Census Bureau ແລະ ປະຕິບັດວຽກຂອງເຂົາເຈົ້າຢ່າງຖືກຕ້ອງ. ການສຳພາດຄືນໃໝ່ຈະດຳເນີນໂດຍ ຄົນເຮັດການສຳຫລວດຕ່າງກັບຜູ້ທີ່ ໄດ້ມາເຮືອນທ່ານຜູ້ທຳອິດ. ການດຳເນີນງານ ການສຳພາດຄືນໃໝ່ເພື່ອຕິດຕາມ ຜູ້ທີ່ຍັງບໍ່ໄດ້ຕອບການສຳຫລວດແມ່ນໄດ້ຖືກກຳນົດເວລາໃນການເລີ່ມ ຈາກ ວັນທີ 12 ສິງຫາ ຫາ 31 ຕຸລາ. ຜູ້ເຮັດການສຳຫລວດທັງໝົດມີ ກາບັດປະຈຳຕົວທາງການທີ່ລວມເຖິງ ຊື່, ຮູບພາບ, ເສັ້ນລາຍນ້ຳ ຂອງ ກະຊວງການຄ້າແຫ່ງ ສະຫະລັດຯ ແລະ ວັນທີໝົດອາຍຸ.*

- ໂປຣແກຣມການຊ່ວຍເຫລືອແບບສອບຖາມເຄື່ອນທີ່ຂອງ Census Bureau (MQA) ແມ່ນຖືກດັດແກ້. Census Bureau ຄາດຄະເນວ່າ ພະນັກງານ MQA ອາດສາມາດເລີ່ມຄືນໃໝ່ໃນການສະໜອງການຊ່ວຍເຫລືອ ການສຳຫລວດດ້ວຍຕົນເອງ ໃນ ບໍລິເວນໃກ້ຄຽງ ທີ່ຕອບສະໜອງຢູ່ໃນລະດັບຕ່ຳ. ພະນັກງານ Census Bureau ທັງໝົດທີ່ກ່ຽວພັນໃນ MQA ຈະປະຕິບັດຕາມຄຳແນະນຳທ້ອງຖິ່ນ ສຳລັບ PPE ແລະ ໄລຍະຫ່າງທາງສັງຄົມ.
- Census Bureau ຈະສືບຕໍ່ ໂຄສະນາການສື່ສານຂອງພວກເຂົາ ຈົນຮອດເດືອນ ຕຸລາ 2020. ການເຜີຍແຜ່ໂຄສະນາທີ່ກວ້າງຂວາງໄດ້ໄປເຖິງກຸ່ມຄົນເປົ້າໝາຍໃໝ່ ໃນ 33 ພາສາ, ແລະລວມທັງໝົດແມ່ນ 45 ພາສາທີ່ບໍ່ແມ່ນພາສາອັງກິດ. ພາສາທີ່ຂະຫຍາຍອອກຈະກວມເອົາ ການພິມ ແລະ ການໂຄສະນາດິຈິຕອນເພື່ອຊ່ວຍນັບພື້ນທີ່ທີ່ມີພົນລະເມືອງບໍ່ໄດ້ຖືກນັບໃນອະດີດຜ່ານມາ.

**<u>ການນັບນັກສຶກສາມະຫາວິທະຍາໄລທີ່ພັກຢູ່ນອກຂົງເຂດມະຫາວິທະຍາໄລ</u>**

Census Bureau ຈະຕິດຕໍ່ວິທະຍາໄລ ແລະ ມະຫາວິທະຍາໄລທີ່ມີນັກສຶກສາອາໄສຢູ່ນອກຂົງເຂດຈຳນວນຫລວງຫລາຍເພື່ອຊ່ວຍຮັບປະກັນວ່າ ພວກເຂົາຖືກນັບໃນບ່ອນທີ່ຖືກຕ້ອງ ໃນ 2020 Census ເຖິງແມ່ນວ່າ ພວກເຂົາກັບບ້ານກ່ອນກຳນົດຍ້ອນວ່າ ການປິດໂຮງຮຽນ ຫລື ປ່ຽນເປັນການສຶກສາທາງໄກ.

- Census Bureau ໄດ້ຂໍຄວາມຊ່ວຍເຫລືອຈາກວິທະຍາໄລ ໂດຍການສອບຖາມຄຳຖາມພື້ນຖານ ທີ່ໄດ້ສະໜອງ ມະຫາວິທະຍາໄລແລ້ວໂດຍ ນັກສຶກສານອກຂົງເຂດ ວິທະຍາໄລ.
- ເຈົ້າໜ້າທີ່ Census Bureau ໄດ້ເລີ່ມໂທພະນັກງານໂຮງຮຽນ ວັນທີ 16 ມິຖຸນາ ແລະ ຂັ້ນຕໍ່າຈະຮຽກຮ້ອງ ຊື່ແລະນາມສະກຸນ, ວັນເດືອນປີເກີດ ແລະ ທີ່ຢູ່ທ້ອງຖິ່ນ ແລະທີ່ຢູ່ອື່ນ. ໂດຍການເຂົ້າເຖິຂໍ້ມູນນີ້, Census Bureau ສາມາດຮັບປະກັນວ່າ ນັກສຶກສາວິທະຍາໄລແມ່ນຖືກນັບໃນບ່ອນທີ່ຖືກຕ້ອງ, ລວມທັງ ການເອົາຄຳຕອບທີ່ຊໍ້າກັນໃນການສຳຫລວດອອກໄປ ຫລື ເພື່ອນັບນັກສຶກສາ (ຫາກບໍ່ມີບັນທຶກສຳລັບບຸກຄົນດຽວກັນໃນສະຖານທີ່ອື່ນ). ສຳລັບຂໍ້ມູນທັງໝົດທີ່ Census Bureau ເກັບເອົາ, ຂໍ້ມູນສ່ວນຕົວນີ້ຖືກປົກປ້ອງໂດຍກົດໝາຍ.
- [ເບິ່ງທີ່ນີ້ ໜັງສືຈາກ Census Bureau ສຳລັບອະທິການບໍດີ ວິທະຍາໄລ ແລະ ມະຫາວິທະຍາໄລ.]

**<u>ການຈ້າງຄົນງານຂອງ Census Bureau</u>**

Census Bureau ສືບຕໍ່ໃນການຈ້າງຜູ້ເຮັດການສຳຫລວດ ແລະ ຄົນງານຊົ່ວຄາວ. [ເບິ່ງທີ່ນີ້ Census Bureau ກຳລັງຈ້າງຄົນງານໃນເຄົ້າຕີ ຫລື ເຂດປົກຄອງໃດແດ່.]

ເບິ່ງເພີ່ມເຕີມທີ່ www.CountUsIn2020.org/covid-19.